ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# Lao Traditional Literature

## Lecture 8: Oral Stories (Con.)

**Lecturer: Somthapheuy SYVONGSAK**

**Academic Year 2023-2024**

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# ບົດສອນ

**ວິຊາ:** ວັນນະຄະດີພື້ນເມືອງລາວ
**ລະຫັດ:** 0907108
**ບົດທີ 3:** ພື້ນສືບ (ຕໍ່) ເວລາ: 90 ນາທີ
**ຜູ້ບັນຍາຍ:** ອຈ.ປທ. ສົມທະເພີຍ ສີວົງສັກ
**ປີ:** 3
**ພາກຮຽນ:** 1
**ສົກຮຽນ:** 2023-2024

<table>
<tr><td colspan="2">ຂັ້ນຕອນ 1 - ຜົນຮັບທີ່ຕ້ອງການ (Desire Results)</td></tr>
<tr><td colspan="2">ສ້າງເປົ້າໝາຍ (Goals):<br>ນັກຮຽນຈະຮູ້:<br>- ເລື່ອງ "ທ້າວຈັນທະພານິດ"<br>- ເລື່ອງ "ຂຸນບູລົມ"</td></tr>
<tr><td>ຄວາມເຂົ້າໃຈ (Understand):<br>ນັກຮຽນຈະເຂົ້າໃຈ:<br>- ເລື່ອງ "ທ້າວຈັນທະພານິດ"<br>- ເລື່ອງ "ຂຸນບູລົມ"</td><td>ຄຳຖາມຫຼັກ (Questions):<br>1) ເລື່ອງ "ທ້າວຈັນທະພານິດ" ມີເນື້ອໃນເວົ້າເຖິງຫຍັງແດ່?<br>2) ເລື່ອງ "ຂຸນບູລົມ" ມີເນື້ອໃນເວົ້າເຖິງຫຍັງແດ່?</td></tr>
<tr><td>ຄວາມຮູ້ (Knowledge):<br>- ໃຫ້ນັກຮຽນຮູ້ໄດ້ເຖິງເນື້ອໃນຂອງເລື່ອງ "ທ້າວຈັນທະພານິດ" ແລະ ເລື່ອງ "ຂຸນບູລົມ".</td><td>ທັກສະ (Skills):<br>- ອະທິບາຍໄດ້ເຖິງ ເນື້ອຂອງເລື່ອງ "ທ້າວຈັນທະພານິດ" ແລະ ເລື່ອງ "ຂຸນບູລົມ".</td></tr>
<tr><td colspan="2">ຂັ້ນຕອນ 2 - ຫຼັກຖານປະເມີນ</td></tr>
<tr><td>ໜ້າວຽກສິດສອນ (Tasks):<br>- ສັງເກດການຄົ້ນຄວ້າຂອງນັກສຶກສາ<br>- ສົນທະນາຖາມ-ຕອບ<br>- ແນະນຳການຄົ້ນຄວ້າ.<br>- ໃບວຽກບ້ານ</td><td>ຫຼັກຖານອື່ນໆ (Other Evidence):<br>- ລາຍງານຜົນການຄົ້ນຄວ້າ<br>- ເນື້ອໃນຄຳຕອບກິດຈະກຳຂອງນັກສຶກສາ<br>- ການສັງຮວມກິດຈະກຳ<br>- ຜົນການກວດວຽກບ້ານ</td></tr>
<tr><td colspan="2">ຂັ້ນຕອນ 3 ແຜນການຮຽນ-ການສອນ (Teaching and Learning Plan)</td></tr>
<tr><td colspan="2">- ສື່ການສອນມີ:<br>ປຶ້ມຕຳລາວິຊາວັນນະຄະດີພື້ນເມືອງລາວ, ປຶ້ມວັນນະຄະດີລາວ, ວັນນະຄະດີພື້ນເມືອງ1, ວັນນະຄະດີຊັ້ນມັດທະຍົມປີທີ4, ເວັບໄຊ້ຂໍ້ມູນ, ຄອມພິວເຕີ, ເຄື່ອງສາຍ LCD, ໃບກິດຈະກຳ.</td></tr>
</table>

- **ກິດຈະກຳການຮຽນ**

**I. ທວນຄືນ ແລະ ລ້ຽວເຂົ້າສູ່ບົດຮຽນ:**

- **ທວນຄືນບົດຮຽນເກົ່າ**
- ຄູນຳພານັກຮຽນທວນຄືນບົດຮຽນ ໂດຍໃຫ້ນັກຮຽນເວົ້າເຖິງເນື້ອໃນ ແລະ ສິລະປະຂອງພື້ນສືບ.

**II. ຂັ້ນລ້ຽວເຂົ້າສູ່ບົດສອນ:**

**ບົດທີ 3**

**ພື້ນສືບ (ຕໍ່)**

**5. ເລື່ອງ "ທ້າວຈັນທະພານິດ"** ( 40 ນາທີ)

***ກິດຈະກຳ 1:***

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ
  1) ເລື່ອງ "ທ້າວຈັນທະພານິດ" ມີເນື້ອໃນເວົ້າເຖິງຫຍັງແດ່?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (35 ນາທີ)

ດິນແດນລ້ານຊ້າງເປັນດິນແດນຮັ່ງມີ ແລະ ສວຍງາມເຄີຍມີຊື່ປາກົດໃນປະຫວັດສາດຂອງລາວເປັນເວລາຊ້ານານ ນະຄອນຫຼວງຂອງດິນແດນລ້ານຊ້າງສະໄໝໜຶ່ງ ມີຊື່ວ່າຊຽງດົງ ຊຽງທອງອັນເປັນນະຄອນທີ່ອຸດົມສົມບູນດ້ວຍທອງຄຳ ຄົນລາວທີ່ເປັນເຈົ້າຂອງກໍເປັນຊາດທີ່ພິລະອາດຫານເຄີຍມີການຕໍ່ສູ້ປົກປັກຮັກສາ ແລະ ສ້າງບ້ານແປງເຮືອນສືບມາຫຼາຍເຊັ່ນຄົນ ເຄີຍມີເຈົ້າກະສັດສືບລາຊະວົງຕໍ່ກັນມາຫຼາຍສະໄໝ ຈົນຮອດສະໄມຂຸນຊວາ, ຂຸນຍິປາ, ຂຸນວິລິບາ, ຂຸນກັນຮາງ, ຂຸນລໍເປັນລຳດັບ. ນະຄອນຫຼວງແຫ່ງນີ້ຈຶ່ງປາກົດມີຊື່ວ່າເມືອງຊວາລ້ານຊ້າງ ກ່ອນສະໄໝຂຸນຊວາພຸ້ນບໍ່ຮູ້ວ່າເຫິງນານປານໃດ ຍັງມີກະສັດອົງໜຶ່ງຊື່ວ່າ  ພະຍາຈັນທະພານິດເປັນຜູ້ມີຊື່ລືຊາວ່າເປັນເຈົ້າແຫ່ງທອງຄຳນຳເອົາຄວາມຢູ່ເຢັນເປັນສຸກມາສູ່ໄພ່ຟ້າລາຊະດອນເປັນເວລາອັນຍາວນານໂດຍມີນິທານເລົ່າສືບກັນມາດັ່ງນີ້: "ປາງກ່ອນຍັງມີກະໄທຊາຍອົງໜຶ່ງ ຊື່ວ່າ "ຈັນທາ" ຢູ່ເມືອງວຽງຈັນເປັນຄົນທຳມະດາສາມັນ ທຳມາຫາກິນດ້ວຍການຄ້າຂາຍພູໃນແຕ່ລະມື້ທ້າວເຄີຍຫາບກະຕ່າພູທ່ຽວໄປຂາຍໃນທີ່ຕ່າງໆນອກຈາກຂາຍພູໃນບໍລິເວນບ້ານແລ້ວຍັງຫາບໄປຂາຍໃນບ້ານຕ່າງໆທີ່ຢູ່ຫ່າງໄກໂດຍອາໄສວັດ ແລະສາລາເປັນບ່ອນພັກຜ່ອນຢູ່ໃນກຸຕິຫຼັງໜຶ່ງໂດຍຄວາມເອື້ອເຟື້ອຈາກເຖນອົງໜຶ່ງ ໃນຄືນນັ້ນ ເວລາທີ່ຈັນທານອນຫຼັບມະຫາເຖນຊ້ຳໄດ້ຍິນສຽງດົນຕີເພງໄຊດັ່ງສະນັ່ນນັນເມືອງໃນທີ່ນັ້ນ ມະຫາເຖນຮູ້ສຶກແປກປະຫຼາດໃຈ ເປັນອັນມາກ ຈຶ່ງເອົາມືຊຸກກວຍພູຢູ່ທີ່ຕັ້ງຕັ້ງຢູ່ຂອກຂ້າງຈັນທາ ຫວັງວ່າຈະປຸກໃຫ້ຈັນທາຕື່ນຂຶ້ນເພື່ອພ້ອມກັນຟັງສຽງມະຫັດສະຈັນນັ້ນເມື່ອທ້າວຈັນທາຖືກປຸກຈັ່ງຊັນກໍສະດຸ້ງຕື່ນຂຶ້ນດ້ວຍຄວາມຝັນອັນແປກປະຫຼາດແຕ່ພ້ອມກັນນັ້ນ ສຽງດົນຕີທີ່ດັງກ້ອງກັງວານຢູ່ຫວ່າງຢ່ານີ້ກໍ່ງຽບຫາຍໄປມະຫາເຖນເຫັນດັ່ງນັ້ນຈຶ່ງລົ້ມຫົວນອນລົງອີກໂດຍບໍ່ປາກບໍ່ເວົ້າປະການໃດ ສ່ວນຈັນທາເມື່ອຕື່ນຂຶ້ນມາແລ້ວກໍຮູ້ສຶກສົນໃຈໃນຄວາມຝັນຂອງຕົນເປັນທີ່ສຸດ ແຕ່ບໍ່ກ້າເວົ້າຄວາມຝັນນຳມະຫາເຖນ. ເມື່ອຮຸ່ງເຊົ້າຫຼັງຈາກຊ່ວຍໜ້າແລ້ວທ້າວກໍຫາບກວຍພູໄປຂາຍເຊັ່ນເຄີຍ ເມື່ອພົບໄທບ້ານທີ່ຄຸ້ນແກ່ນກັນທ້າວຈຶ່ງແກ້ຄວາມຝັນຂອງຕົນນຳໄທບ້ານ ແຕ່ໄທບ້ານຊ້ຳພັດເວົ້າໄປແນວຕ່າງໆນາໆຍິ່ງເຮັດໃຫ້ທ້າວມີຄວາມສົນໃຈໃນຄວາມຝັນຂອງຕົນເອງບາງຄົນກໍເວົ້າວ່າ ຄົນຜູ້ນ້ອຍຝັນໃຫຍ່ຈັກຂາດ

ຄວາມອັບປີຈັ່ງໄຣ ບາງຄົນກໍເວົ້າຝັນດີກໍກາຍເປັນຮ້າຍ ບາງຄົນກໍເວົ້າວ່າຄວາມຝັນນີ້ບໍ່ເປັນຕາໜ້າເຊື່ອ ບາງເທື່ອຝັນໄດ້ກອດຊູ້ມືນຕາຂຶ້ນມາຊໍ້າແມ່ນໝອນເມື່ອເປັນແນວນັ້ນຈັນທາຈຶ່ງກັບໄປຫາມະຫາເຖນ ແລະ ໄຫວ້ມະຫາເຖນວ່າຂ້າແດ່ທ່ານອາຈານເອີ່ຍ ຂ້ານ້ອຍຫຼັບໄປໃນຄືນນັ້ນ ລວດຝັນວ່າຕົນມີລິດທານຸພາບ ປາກຄາບດວງຈັນສອງຕີນຢັນພະອາທິດ ບໍ່ຮູ້ວ່າຈະເປັນມູນເຫດຮ້າຍປະການໃດທ່ານເອີຍ ເມື່ອໄດ້ຍິນຈັນທາແກ້ຄວາມແປກປະຫຼາດປະກອບດ້ວຍຕົນເອງກໍໄດ້ຍິນສຽງດົນຕີເສບງັນໃນຄືນນັ້ນມະຫາເຖນຈຶ່ງຄິດຄະນຶງວ່າ ກະໄທຊາຍຜູ້ນີ້ອາດຈະເກີດເປັນຜູ້ມີບຸນຍັກສັກໃຫຍ່ແທ້ ຄຶດແລ້ວມະຫາເຖນຈຶ່ງກ່າວວ່າ ດູລາທ່ານເອີຍຄວາມຝັນເຫຼົ່ານີ້ເປັນນິລະມິດດີຝັນປະເສີດຫາກຈະເກີດໂຊກດີໃນພາຍໜ້າບໍ່ຢ່າສະແລ.

ເມື່ອທຳນາຍຄວາມຝັນແລ້ວ ມະຫາເຖນກໍໄດ້ແນະນຳຄຳສອນແກ່ທ້າວດ້ວຍຄວາມຮັກແພງ ແລະ ເຊື່ອຖືຫຼາຍປະການ ນັບແຕ່ນັ້ນມາກໍໄດ້ປະຕິບັດຕາມຄຳສອນຂອງມະຫາເຖນທຳມາຫາກິນດ້ວຍຄວາມດຸໝັ່ນພາກພຽນ ແລະ ຊື່ສັດສຸດຈະລິດຈົນກາຍເປັນພໍ່ຄ້າຜູ້ໜຶ່ງທີ່ຄົນທັງຫຼາຍເອີ້ນວ່າ: ພໍ່ຄ້າຂາຍພູເຫດວ່າໄດ້ເລີ່ມຕົ້ນຈາກການຂາຍພູເປັນຕົ້ນທຶນ.

ຢູ່ຕໍ່ມາຈົນທາເຮືອໄດ້ລຳໜຶ່ງແລ້ວກໍຊັກຊວນເອົາຍາດພີ່ນ້ອງ ແລະ ມິດສະຫາຍໄດ້ຈຳນວນໜຶ່ງພາກັນຖໍ່ເຮືອຄ້າຈາກວຽງຈັນ ມຸ່ງໜ້າຂຶ້ນເມືອທາງເໜືອ ຕາມການແນະນຳຂອງມະຫາເຖນ.

ໃນເວລາທີ່ຖໍ່ເຮືອຕາມລຳນໍ້າຂອງ ຂຶ້ນໄປຮອດຜາຕັດແກ້ ແລະ ຜາຕັ້ງ ໃນນັ້ນໄດ້ປາກົດເຫັນທອງຄຳຕິດປາຍໄມ້ຖໍ່ຂຶ້ນມາເປັນກ້ອນໃຫຍ່ ແຕ່ກໍຍ້ອນປະຕິບັດຕາມຄຳແນະນຳຂອງມະຫາເຖນຢ່າງເຄັ່ງຄັດ ເຫັນທອງຄຳຕິດປາຍໄມ້ຖໍ່ຂຶ້ນມາສອງເທື່ອສາມເທື່ອ ທ້າວຈັນທາກໍເອົາຈົນວ່າພວກບ່າວເຮືອຮ້ອງໂອຍຄາງ ແລະ ຕົບເອິກຕີອາງຈົນວ່າເສຍດາຍເດ! ເສຍດາຍເດ! ໃນຂະນະທີ່ເຫັນທ້າວຈັນທາປ່ອຍກ້ອນຄຳລົງໃນນໍ້າ ເມື່ອໄດ້ຍິນທຸກຄົນຈົ່ມເສຍດາຍທ້າວຈຶ່ງກ່າວວ່າ ພວກເຈົ້າທັງຫຼາຍເອີຍຢ່າເສຍດາຍເທີ້ນ ເຮົາຈະໄດ້ພາຍພາກໜ້າພຸ້ນຫຼາຍກ່ວານີ້ໝື່ນຕໍ່ແສນຕໍ່ທີແທ້ດາຍ. ວ່າແລ້ວກໍພາກັນສືບຕໍ່ທໍ່ເຮືອຂຶ້ນເມືອເໜືອຊັກໄຊ້ຈົນຮອດດອນແຫ່ງໜຶ່ງຮຽກວ່າ: “ ດອນຊາຍຄວາຍຮ້າ ” ໄປຮອດຫັ້ນກໍເປັນເວລາຄໍ່າພໍດີ ຈຶ່ງພາກັນຈອດເຮືອໄວ້ທ່າ ແລ້ວພາກັນຂຶ້ນປຸກຕູບແປງຜາມພັກເຊົາຢູ່ດອນທີ່ນັ້ນ ຕື່ນເຊົ້າມາໄດ້ເຫັນຊາຍຄົນໜຶ່ງ ແບກກ້ອນຫີນລົງມາຫາ ທ້າວຈັນທາໄດ້ຖາມດູລາທ່ານ ທ່ານແບກວັດຖຸລົງມາເຮັດຫຍັງນີ້ນາ? ຊາຍຄົນນັ້ນກໍ່ຕອບວ່າຂ້ອຍແບກກ້ອນຫີນອັນນີ້ມາເພື່ອແລກປ່ຽນເຄື່ອງຄ້າບາງອັນຂອງເຄື່ອງທັງຫຼາຍດາບເມື່ອນັ້ນຈັນທາຈຶ່ງກ່າວວ່າ ອັນທ່ານແບກມານັ້ນຕັ້ງແມ່ນກ້ອນຄຳແພງແດງແພງມາກແທ້ດາຍ.

ເມື່ອໄດ້ຍິນແນວນັ້ນຊາຍຄົນນັ້ນກໍ່ປົ່ງລົງຈາກບ່າ ກ້ອນຫີນລັບມິດຝົນພ້າກໍກາຍເປັນກ້ອນຄຳແດງແພງມາກມາຍແທ້ດາຍ ທີ່ພົບເຫັນຕ່າງໆງຶດງໍ້ອັດສະຈັນຈຶ່ງພ້ອມກັນຈັດຕັ້ງພິທີມະໂຫລານ ທຳການສະຫຼອງ 7 ວັນ 7 ຄືນ ຢ່າງຄຶກຄື້ນ. ໃນມື້ວັນຖ້ວນ 7 ນັ້ນ ທ້າວຈັນທາຈຶ່ງໄດ້ໃຫ້ຄົນທັງຫຼາຍໄປເກັບເອົາກ້ອນຄຳມາກອງໄວ້ເປັນຊັບສົມບັດຂອງບ້ານເມືອງ. ນອກຈາກນັ້ນກໍແຈກຢາຍໃຫ້ຄົນທັງຫຼາຍຈົນທົ່ວໜ້າ, ເຫດການອັນໜ້າອັດສະຈັນນັ້ນເປັນຂ່າວຊ່າລືພືແຜ່ໄປທົ່ວທຸກແຫ່ງຫົນ ຝູງຄົນທີ່ຢູ່ທາງໄກທະຍອຍກັນເຂົ້າມາເຕົ້າໂຮມເປັນອັນມາກ ແລະ ພ້ອມກັນຍ້ອງຍໍສັນລະເສີນບຸນຄຸນຂອງຈັນທາພໍ່ຄ້າພູເປັນທີ່ຍິ່ງເນື່ອງຈາກວ່າຜູ້ຄົນເຕົ້າໂຮມກັນຢູ່ຢ່າງໜາແໜ້ນອັ່ງອໍ. ດັ່ງນັ້ນ, ປ່າດົງພົງໄພຈຶ່ງຖືກຖາງອອກເພື່ອສ້າງລາຊະວັງ ແລະ ເວລາຂຸດດິນລົງເພື່ອເອົາເສົາຝັງຊໍ້າພັດໄດ້ພົບແຜ່ນທອງໃນພື້ນດິນເປັນອັນມາກ. ດັ່ງນັ້ນ, ຫໍປະສາດຫຼັງນັ້ນ ຈຶ່ງໄດ້ຊື່ວ່າ: ໂລຫະປະສາດ ຫຼື ໂຮງຊຽງທອງຕາມນິມິດສອງປະການ

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

ດັ່ງກ່າວ ເມື່ອສຳເລັດແລ້ວ ຈຶ່ງພາກັນເອົາກ້ອນຄຳມາກໍ່ກອງກັນຂຶ້ນເປັນລາຊະບັນລັງແລ້ວເຊີນຈັນທາພໍ່ຄ້າຂາຍພູຂຶ້ນນັ່ງເທິງກອງຄຳ ແລະ ທຳລາຊາພິເສກໃຫ້ເປັນເຈົ້າພະຍາປົກຄອງເມືອງຂະໜານນາມວ່າ: ພະຍາຈັນທະພານິດ ສະຖິດສຸວັນນະພູມ ທີ່ມີຊື່ລືຊາ ໂດຍເປັນນະຄອນຫຼວງໃຫຍ່ສວຍງາມ ອັນມີນາມວ່າ:ຊຽງດົງຊຽງທອງແຕ່ນັ້ນມາ ເມື່ອໄດ້ຂຶ້ນສະເຫວີຍລາດບ້ານເມືອງແລ້ວ ພະຍາຈັນທະພານິດກໍບໍ່ໄດ້ປະຫມາດເມົາມົວນຳຄວາມສຸກສ່ວນຕົວຂອງພະອົງ. ພະອົງໄດ້ຊີ້ງນຳໄພຟ້າປະຊາກອນ ສ້າງສາບ້ານເມືອງໃຫ້ຮຸ່ງເຮືອງຍິ່ງໆຂຶ້ນ. ຈົນດິນແດນຊຽງດົງຊຽງທອງໄດ້ກາຍເປັນບ້ານຮັ່ງເມືອງມີອຸດົມສົມບູນໄປດ້ວຍຊັບສິນເງິນຄຳ ເຂົ້ານ້ຳຊ້ຳປາໄພ່ຟ້າປະຊາກອນ ກໍໄດ້ແຕ່ຄວາມຍົກຍ້ອງ ແລະຢູ່ເຢັນເປັນສຸກ ເປັນເວລາເຫິງນານເມື່ອສັງຂານແຫ່ງຕົນເຖົ້າແກ່ແລ້ວ ພະຍາຈັນທະພານິດຈຶ່ງເຫັນວ່າ ຕົນເອງບໍ່ຕັ້ງທ່ຽງຖາວອນຕະຫຼອດໄປພາຍໜ້າ ບ້ານເມືອງກໍມີການຜັນປ່ຽນແປງຍຸກສະໄໝອາດຈະເກີດໂພຍໄພທຳມະຊາດ ແລະສົງຄາມ. ຖ້າຫາກບໍ່ມີວິທີປົກປັກຮັກສາໄວ້ ຊັບສົມບັດຫຼືເຂົ້າຂອງທີ່ສະສົມໄວ້ເປັນອັນມາກກໍຈັກຖືກຈິບຫາຍສາບສູນໄປ ແລ ສືບເຊື້ອສະກຸນກໍຈັກໄດ້ຄວາມທຸກຍາກອຶດຍາກ.

ເມື່ອຄິດດັ່ງນັ້ນແລ້ວພະຍາຈັນທະພານິດ ຈຶ່ງໄດ້ລະດົມໄພ່ພົນຂົນເອົາສັບສົມບັດເຂົ້າຂອງເງິນຄຳນຳໄປເປັນໂກດເປັນແສນເຂົ້າໃສ່ກັນໄວ້ສາງໃຫຍ່ ໃນຖ້ຳພູຊວງນ້ອຍຫຼືພູຊວງຫຼວງ ແລ້ວກໍແປງຮາວຕ່າວຍົນຫ້າງຕັນໄວ້ແຈບຈາກນັ້ນກໍປັ້ນຮູບນິກຍາງຢືນໂສກເສົ້າຫງ່ວມເຫົງາຢູ່ທີ່ນັ້ນ.

ຫຼັງຈາກພະຍາຈັນທະພານິດໄດ້ມ້ຽນຊັບສົມບັດໄວ້ດີແລ້ວ ຢູ່ຕໍ່ມາພະຍາກໍໝົດອາຍຸສັງຂານຂອງຕົນ ເຖົ້າແກ່ບູຮານເຄີຍກ່າວໄວ້ວ່າ ການທີ່ພະຍາຈັນທະພານິດປັ້ນຮູບນິກຍາງຢືນໂສກເສົ້າຫງ່ວມເຫົງາໝາຍໄວ້ປາກຖ້ຳນັ້ນ ເພື່ອວ່າຈະໃຫ້ຄົນຜູ້ມີປັນຍາສືບຮູ້ຫາເຫັນບ່ອນຝັງສັບສົມບັດ. ໃນເມື່ອເວລາຜ່ານພົ້ນໄປແລ້ວ ອີກປະການໜຶ່ງຢາກໃຫ້ຜູ້ມີປັນຍາແກ້ໄຂບັນຫາ 12 ຂໍ້ ອັນມີໃນນິທານນິກຍາງຊື່ວ່າ: ກິຍຸໂຍກໃນປາງກ່ອນໃຫ້ສຸລຸລ່ວງໄປ ເພື່ອໃຫ້ປະໂຫຍດໃນການຕົບແຕ່ງວຽກບ້ານການເມືອງ ແຕ່ວ່າເມື່ອໃດຫາກບໍ່ເຖິງຍຸກສະໄໝ ແລະ ແກ້ໄຂບັນຫານິກຍາງບໍ່ທັນຕົກແຕກຄົນເຮົາກໍບໍ່ສາມາດເຫັນນິກຍາງ ແລະ ຄົ້ນພົບຂຸມທີ່ພະຍາຈັນທະພານິດຝັງໄວ້ນັ້ນໄດ້ ບັນຫານິກຍາງ12ຂໍ້ດັ່ງນີ້:

1. ນິກຍາງເອີຍເປັນຫຍັງເຈົ້າບໍ່ກອກ? ຂ້ອຍບໍ່ກອກຍ້ອນປາບໍ່ບ້ອນ
2. ປາເອີຍເປັນຫຍັງເຈົ້າບໍ່ບ້ອນ? ຂ້ອຍບໍ່ບ້ອນຍ້ອນຫຍ້າໄຊຣົກ
3. ຫຍ້າໄຊເອີຍເປັນຫຍັງເຈົ້າຈຶ່ງຣົກ? ຂ້ອຍຣົກຍ້ອນງົວບໍ່ກັດ
4. ງົວເອີຍເປັນຫຍັງເຈົ້າບໍ່ກັດ? ຂ້ອຍບໍ່ກັດຍ້ອນເຈົ້າຂອງບໍ່ປ່ອຍ
5. ເຈົ້າຂອງເອີຍເປັນຫຍັງບໍ່ປ່ອຍງົວ? ຍ້ອນວ່າຂ້ອຍຍັງແສບທ້ອງຫິວເຂົ້າ
6. ທ້ອງເອີຍເປັນຫຍັງຈຶ່ງແສບ? ຂ້ອຍແສບທ້ອງຍ້ອນເຂົ້າບໍ່ສຸກ
7. ເຂົ້າເອີຍເປັນຫຍັງເຈົ້າບໍ່ສຸກ? ບໍ່ສຸກແລ້ວ ຍ້ອນໄຟບໍ່ລຸກ
8. ໄຟເອີຍເປັນຫຍັງເຈົ້າຈຶ່ງບໍ່ລຸກ? ຂ້ອຍບໍ່ລຸກຍ້ອນຟືນຊຸ່ມ
9. ຟືນເອີຍເປັນຫຍັງເຈົ້າຈຶ່ງຊຸ່ມ? ຊຸ່ມແທ້ຍ້ອນຝົນຕົກຣຳ
10. ຝົນເອີຍເປັນຫຍັງຈຶ່ງຕົກຣຳ? ຍ້ອນກົບຂຽດຮ້ອງຫຼາຍ
11. ກົບຂຽດເອີຍເປັນຫຍັງຈຶ່ງຮ້ອງ? ຮ້ອງແທ້ຍ້ອນງູໄລ່ກັດ

12. ງູເອີຍເປັນຫຍັງຈຶ່ງໄລ່ກັດກົບຂຽດ?

ບັນຫານິກຍາງ 12 ຂໍ້ນັ້ນເປັນບັນຫາພົວພັນເຊື່ອງກັນ ແລະ ກັນຢ່າງແໜ້ນແຟ້ນ ແລະ ບັນຫາສຸດທ້າຍໄດ້ແກ່ງູ ບັນດານັກປາດອາຈານແຕ່ເກົ່າກ່ອນມີການຄົ້ນຄ້ວາ ແລະ ອະທິບາຍກັນມາແລ້ວເປັນອັນມາກແຕ່ບໍ່ທັນສາມາດຈັດການແກ້ໄຂບັນຫານັ້ນໃຫ້ຕົກແຕກໄປຢ່າງເປັນຈິງໄດ້. ດັ່ງນັ້ນ,ພະຍາຈັນທະພານິດ ຜູ້ຄິດກວ້າງມອງໄກ ຈຶ່ງປັ້ນແຕ່ງເປັນຮູບນິກຍາງໄວ້ ເປັນສັນຍາລັກໝາຍໄວ້ເມື່ອໃດຫາກເຖິງຍຸກສະໄໝ ແລະ ຄົນເຮົາກໍແກ້ໄຂບັນຫານິກຍາງໄວ້ແລ້ວ ເມື່ອນັ້ນຮູບນິກຍາງກໍ່ຈະປາກົດສາຍຕາຄົນທັງຫຼາຍ ແລ້ວຄົນຜູ້ມີສິນທຳ ແລະ ມີສະຕິປັນຍາທັງຫຼາຍກໍ່ສາມາດຄົ້ນພົບ ແລະ ນຳເອົາຊັບສິນບັດເຂົ້າຂອງເງິນຄຳທີ່ພະຍາຈັນທະພານິດທີ່ຝັງໄວ້ໃນພື້ນດິນນັ້ນ ອອກມາໃຊ້ໃຫ້ເປັນປະໂຫຍດ

ໃນການປັບຊາດໃຫ້ເຂັ້ມແຂງ, ສ້າງແປງບ້ານເມືອງໃຫ້ຮຸ່ງເຮືອງເຫຼືອງງາມ ສົມຕາມຈິດໃຈຂອງປະຊາຊົນ ຊຶ່ງເປັນທ່ອງເປັນໃຍນຳລູກຫຼານເຫຼັນຫຼອນຜູ້ສືບເຊື້ອຕະກຸນລາວ (ກຽງແກ້ວ ນອນນະວົງ ແລະຄະນະ, 2002).

**6. ເລື່ອງ “ຂຸນບູລົມ”.** (20 ນາທີ)

**<u>ກິດຈະກຳ 2:</u>**

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ

1) ເລື່ອງ “ຂຸນບູລົມ” ມີເນື້ອໃນເວົ້າເຖິງຫຍັງແດ່?

- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (15 ນາທີ)

ແຕ່ກີ້ແຕ່ກ່ອນພຸ້ນຍັງມີແຖນອົງໜຶ່ງ ຊື່ວ່າ ແຖນຟ້າຄື່ນເປັນພໍ່ຂອງຂຸນບູລົມເປັນໃຫຍ່ກ່ວາແຖນທັງຫຼາຍ ເຊັ່ນ: ແຖນແຕ່ງ, ແຖນຄົມ, ແຖນຊັ່ງ, ແຖນເຖືອກ, ແຖນທັງສີ່ຄົນນີ້ຢູ່ເທິງຊັ້ນຟ້າຈາຕູມ ເປັນຜູ້ແຕ່ງໂລກເບິ່ງແຍງສັດສາວາສິ່ງ ກຳນົດບາບບຸນຄຸນໂທດຄວາມຊົ່ວຊ້າ ຄວາມດີຂອງມະນຸດທັງຫຼາຍ ຍັງມີເທວະດາຊື່ວ່າ ນາງທໍລະນີເປັນເຈົ້າແຜ່ນດິນ, ນາງເມກຂະຫຼາຮັກສາແມ່ນ້ຳ ແລະ ຍັງເປັນຜູ້ຮັກສາພະຍາ ທ້າວຂຸນທັງຫຼາຍຜູ້ກະທຳບາບບຸນແລ້ວໄປລາຍງານແຖນທັງສີ່ ເພື່ອໂຈດຖາມ. ຕໍ່ມາກໍມີສະມັດຕະພົມ ໄດ້ລົງມາປັກຫຼັກເງິນ, ຫຼັກຄຳໄວ້ໃນບ່ອນທີ່ຈະຕັ້ງເມືອງໃຫຍ່16ແຫ່ງ ແລະ ເມືອງນ້ອຍ 15 ແຫ່ງ ແລ້ວຈຶ່ງໃຫ້ພະພົມຕົນໜຶ່ງຊື່ວ່າ: ບໍລະເມສອນຮັກສາທິດຕາເວັນອອກ, ພາລະນາຮັກສາທິດຕາເວັນຕົກ, ມະໂນສິດທິ ຮັກສາທິດເໜືອ ແລະ ເສລາສິດ ຮັກສາທິດໃຕ້. ພ້ອມທັງເປັນຜູ້ສອນວິຊາຊີບ ຕະຫຼອດເຖິງສິລະປະກຳຕ່າງໆ ຢູ່ຕໍ່ມາຈຶ່ງມີພະລືສີສອງອ້າຍນ້ອງ ລົງມາຕັ້ງຫຼັກໝາຍໄວ້ຢູ່ເມືອງຊຽງທອງແລ້ວເອີ້ນພະຍານາກ 15 ຕົວ ລົງມາສັ່ງສອນ ແລ້ວກໍມອບໝາຍໃຫ້ເພື່ອຮັກສາບ້ານເມືອງ. ຈາກນັ້ນພະລືສີທັງສອງກໍໄດ້ຮຽກເອົາເທວະດາ 6 ຕົນ ມາສັ່ງສອນອີກຄື: ປູ່ພີສີ, ຍ່າພີໄສ, ທີ່ພູຊວງຫຼວງ ແລະ ພູຊວງນ້ອຍ ທັງສອງຜົວເມຍນີ້ມີໜ້າທີ່ ຮັກສາທາງທິດຕາເວັນອອກ, ທ້າວ ບຸນເຫຼືອ ກັບ ນາງ ເກົ້າງ້າວ ຢູ່ພູແສນເຂົາຄຳ ໃຫ້ຮັກສາເມືອງຝ່າຍເໜືອ, ຕົວຟ້າແສດ ແລະ ນາງພິຈິກ ໃຫ້ຮັກສາເມືອງຝ່າຍໃຕ້. ແຕ່ນັ້ນ ພະລືສີສອງອ້າຍນ້ອງ ຈຶ່ງໄດ້ໃສ່ຊື່ດິນແດນແຫ່ງນັ້ນເປັນເມືອງຊວາ (ລ້ານຊ້າງ) ແລ້ວກໍໃຫ້ພະລືສີຜູ້ເປັນນ້ອງເຝົ້າຢູ່ທີ່ນັ້ນ.

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

ສ່ວນຜູ້ເປັນອ້າຍກໍກັບຄືນເມືອງຟ້າ ເມືອລາຍງານຜົນງານ ແລະ ສະພາບການທັງມວນແກ່ແຖນຫຼວງ. ພ້ອມກັນນັ້ນກໍຂໍຮ້ອງໃຫ້ແຖນຫຼວງ ແຕ່ງຕັ້ງຜູ້ທີ່ມີຄວາມເກັ່ງກ້າສາມາດພ້ອມດ້ວຍຄຸນສົມບັດອັນດີ ລົງມາຄອບຄອງເມືອງດັ່ງກ່າວ. ແຕ່ນັ້ນແຖນຫຼວງຈຶ່ງໄດ້ແຕ່ງຕັ້ງຂຸນບູລົມ ມາຄອບຄອງເມືອງລຸ່ມພ້ອມທັງມອບລູກສາວຂອງແຖນຜົມ ຊື່ ຍົມມະລາໃຫ້ເປັນເມຍຫຼວງ. ນາງເອດແຄງ ລູກສາວແຖນຊົ່ງໃຫ້ເປັນເມຍນ້ອຍ ພ້ອມທັງມອບເຄື່ອງໃຊ້ສອຍຕ່າງໆ ແລະ ສາວຮັບໃຊ້ຈຳນວນໜຶ່ງ. ໃນການລົງມາເມືອງລຸ່ມນີ້ຍັງມີຂຸນທຳມະລາດ. ຂຸນແສງໄປກ່ອນ,ຂຸນອຸ່ນ,ຂຸນຂະລິຂີ່ມ້າຕາມຫຼັງຊ້າງຂອງຂຸນບູລົມ, ປູ່ເຍີ, ແມ່ຍ່າງ່າມ. ທັງສີ່ຄົນນີ້ມີໜ້າທີ່ປາບຜີເຜດ, ຜີຍັກ, ຜີເສື້ອ, ຜີເມືອງ ກ່ອນຂຸນບູລົມຈະລົງມາຮອດ. ຈາກນັ້ນແຖນຈຶ່ງຊີ້ບອກບ່ອນໃຫ້ແກ່ຂຸນບູລົມວ່າ: ໃຫ້ໄປຢູ່ເມືອງນານ້ອຍອ້ອຍໜູ. ຢູ່ທີ່ນັ້ນເປັນເວລາ 9 ປີ. ຂຸນບູລົມກໍ່ໄດ້ລູກຊາຍ 7 ຄົນຄື: ຂຸນລໍ, ຂຸນສິງ, ຂຸນອິນ,ຂຸນເຈັດຈຽງ (ເປັນລູກເມຍຫຼວງ, ລູກເມຍນ້ອຍຂຸນລ້ານ, ຂຸນພວງ ແລະ ຂຸນເຈັດເຈືອງ.

ເມື່ອຢູ່ຮ່ວມກັນຕໍ່ມາຂຸນບູລົມ ພ້ອມທັງເມຍສອງຄົນກໍຈົ່ມທຸກຈົ່ມຍາກ ຈຶ່ງໃຫ້ຂຸນສານ, ປູ່ເຍີ ແລະ ແມ່ຍ່າງ່າມ ເມືອລາຍງານນຳແຖນຟ້າຄື່ນວ່າ: ເຄືອເຂົາກາດທີ່ເອງວ່າດົກໜາ ແດດບໍ່ເຫັນ ຕາເວັນບໍ່ສ່ອງ ເຮັດໃຫ້ເມືອງລຸ່ມມີອາກາດໜາວເຢັນຢ່າງໜັກ. ເມື່ອແຖນໄດ້ຟັງເຊັ່ນນັ້ນແລ້ວ ກໍແຕ່ງໃຫ້ປູ່ເຍີ ແລະ ແມ່ຍ່າງ່າມໄປຕັດເຄືອເຂົາກາດ, ເຖົ້າໄລ່, ແມ່ມົດ ໄປປ້ອມຕົ້ນໄຮຫຼວງ, ແຖນສີ່ວໄປສື່ວມາກນ້ຳເຕົ້າປຸງໜ່ວຍອ້າຍ, ແຖນຊີມາຊີໝາກນ້ຳເຕົ້າປຸງໜ່ວຍນ້ອງ. ເຮັດໃຫ້ຜູ້ຍິງ ຜູ້ຊາຍຈຳນວນຫຼວງຫຼາຍ ຕະຫຼອດຮອດສັດສາວາສິ່ງ ລຸຫຼັ່ງທົ່ງເທອອກມາ. ຈາກນັ້ນແຖນຈຶ່ງບອກໃຫ້ປູ່ເຍີ, ເຖົ້າໄລ່ ເມືອຕັດເຄືອເຂົາກາດ, ປ້ອມຕົ້ນໄຮຫຼວງ ແລະ ຜ່າໝາກນ້ຳເຕົ້າປຸງແລ້ວ ສູ່ຢ່າພາກັນທ່ຽວຂຶ້ນເມືອເທິງຟ້າຫາຕູອີກ. ຄັນສູທັງສີ່ຕາຍແລ້ວ ໄທເມືອງລຸມໄດ້ກິນອັນໃດ ໃຫ້ເອີ້ນສູທັງສີ່ມາກິນກ່ອນ.

ນັບແຕ່ນັ້ນມາ, ບ້ານເມືອງຂອງຂຸນບູລົມ ທີ່ນານ້ອຍອ້ອຍໜູກໍຮຸ່ງແຈ້ງທຸກປະການ. ປູ່ເຍີ, ແມ່ຍ່າງ່າມ, ເຖົ້າໄລ່, ແມ່ຍ່າມົດ ກໍຕາຍໄປເປັນຜີເຊື້ອເມືອງ. ສ່ວນຂຸນບູລົມກໍໄດ້ເລືອກເອົານາງສາວທີ່ສວຍສົດງົດງາມ ທີ່ອອກມາຈາກນ້ຳເຕົ້າປຸງໜ່ວຍອ້າຍນັ້ນ ມາເປັນລູກໃພ້ ພ້ອມດຽວກັນນັ້ນ ຂຸນບູລົມກໍໄດ້ແຕ່ງຕັ້ງໃຫ້ລູກຊາຍທັງ 7 ໄປປົກຄອງເມືອງຕ່າງໆຄື:

-ຂຸນລໍໄປປົກຄອງເມືອງລ້ານຊ້າງ
-ຂຸນສິງໄປປົກຄອງເມືອງຈຸລະຄົມ
-ຂຸນອິນ ໃຫ້ໄປປົກຄອງເມືອງລະໂວ້ໂຍທິຍາ
-ຂຸນເຈັດຈຽງໃຫ້ໄປປົກຄອງເມືອງມ່ວນ.
-ຂຸນລ້ານໃຫ້ໄປປົກຄອງເມືອງຫໍ້ອອງ
-ຂຸນຄາພົງໃຫ້ໄປປົກຄອງເມືອງກູມການໂຍປົກ
-ຂຸນເຈັດເຈືອງໃຫ້ໄປປົກຄອງເມືອງຕາເວັນອອກ

ກ່ອນຈະໄປປົກຄອງແຫ່ງຕ່າງໆ ຂຸນບູລົມຜູ້ເປັນພໍ່ ໄດ້ໃຫ້ໂອວາດລູກຊາຍທັງ 7 ພ້ອມດ້ວຍລູກໃພ້ ກ່ຽວກັບຮີດບ້ານຄອງເມືອງ. ຫຼັກການປົກຄອງໄພ່ຟ້າປະຊາກອນໃຫ້ມີນ້ຳໃຈເອື້ອເຟື້ອອາລີ ເພື່ອແຜ່ຊ່ວຍເຫຼືອເກື້ອກູນຜູ້ທຸກຍາກ ຕະຫຼອດເຖິງຜູ້ຄົນຂໍທານທັງຫຼາຍ (ພູວົງ ໝໍ່ດາລາ ແລະຄະນະ, 2018).

**III. ຂັ້ນສະຫຼຸບ**

- **ຖູເນັ້ນຈຸດສຳຄັນຂອງບົດຮຽນ**
  - ເລື່ອງ “ທ້າວຈັນທະພານິດ”
  - ເລື່ອງ “ຂຸນບູລົມ”

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

**IV. ວັດ ແລະ ປະເມີນ**

- ຄູຖາມຂໍ້ຂ້ອງໃຈຂອງນັກຮຽນ (ຖ້າມີ) ຄູອະທິບາຍຄືນ
- ຄູຕັ້ງຄໍາຖາມ: ແຕ່ລະຂໍ້ຂອງບົດຮຽນ
- ໃຫ້ນັກຮຽນຕອບ 1-2 ຄົນ
- ຄູສັງເກດຄໍາຕອບ ແລະ ສະຫຼຸບຄືນ

**V. ຂັ້ນຕັກເຕືອນ**

- ຄູແນະນໍານັກຮຽນອ່ານບົດຮຽນໃໝ່
- ສຶກສາແນວຄິດຂອງຜູ້ຮຽນ
- ມອບວຽກບ້ານ

**ເອກະສານອ້າງອີງ**

ກຽງແກ້ວ ນອນນະວົງ ແລະຄະນະ. (2002). ວັນນະຄະດີພື້ນເມືອງ 1 ລະຫັດ 630LLI 322. ຄະນະອັກສອນສາດ. ມະຫາວິທະຍາໄລແຫ່ງຊາດ

ພູວົງ ໜໍ່ດາລາ ແລະຄະນະ. (2018). ວັນນະຄະດີພື້ນເມືອງ. ຄະນະສຶກສາສາດ. ມະຫາວິທະຍາໄລ ສຸພານຸວົງ.

ຄູສອນປະຈໍາວິຊາ



ປທ. ສົມທະເພີຍ ສີວົງສັກ